ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ......../ລບ

ນະຄອນຫຼວງວຽງຈັນ, ວັນທີ...............

# (ຮ່າງ)
# ດຳລັດ
# ວ່າດ້ວຍການສຶກສາກ່ອນໄວຮຽນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ ...../...., ລົງວັນທີ....

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານການສຶກສາກ່ອນໄວຮຽນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ຈັດຕັ້ງປະຕິບັດຖືກຕ້ອງ, ເປັນລະບົບ, ໄດ້ມາດຕະຖານ, ມີຄຸນນະພາບ ແລະ ຍືນຍົງ ແນໃສ່ສ້າງເງື່ອນໄຂໃຫ້ເດັກ ອາຍຸ ແຕ່ ສາມເດືອນ ຫາ ຕໍ່າກວ່າ ຫົກປີ ໄດ້ເຂົ້າເຖິງ ການສຶກສາກ່ອນໄວຮຽນ, ໄດ້ຮັບການສົ່ງເສີມສຸຂະພາບ ແລະ ໂພຊະນາການ, ສ້າງປະຖົມປັດໄຈໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການສຶກສາກ່ອນໄວຮຽນ

ການສຶກສາກ່ອນໄວຮຽນ ແມ່ນ ການລ້ຽງດູເດັກໃນໂຮງລ້ຽງເດັກ, ການຮຽນ-ການສອນ ໃນໂຮງຮຽນອະນຸບານ ແລະ ສະຖານການສຶກສາກ່ອນໄວຮຽນອື່ນ ໂດຍມີຈຸດໝາຍ ເພື່ອພັດທະນາເດັກໃຫ້ມີການຂະຫຍາຍຕົວ ແລະ ພັດທະນາການທາງດ້ານ ຮ່າງກາຍ, ສະຕິປັນຍາ, ອາລົມຈິດ, ພາສາ ແລະ ຮຽນຮູ້ຊີວິດສັງຄົມ ເພື່ອກຽມຄວາມພ້ອມເຂົ້າຮຽນຊັ້ນປະຖົມສຶກສາ.

**ມາດຕາ 3 ນະໂຍບາຍຂອງລັດກ່ຽວກັບການສຶກສາກ່ອນໄວຮຽນ**

ລັດກຳນົດເອົາການສຶກສາກ່ອນໄວຮຽນ ເປັນວຽກສຳຄັນໃນການພັດທະນາຊັບພະຍາກອນມະນຸດ ແລະ ສົ່ງເສີມເດັກນ້ອຍທຸກເພດໄວ, ທຸກເຜົ່າໃຫ້ເຂົ້າເຖິງການສຶກສາກ່ອນໄວຮຽນ ໂດຍສະເພາະໄດ້ເອົາໃຈໃສ່ຂະຫຍາຍວຽກງານລ້ຽງເດັກ ແລະ ອະນຸບານສຶກສາໃຫ້ທົ່ວເຖິງ, ມີຄຸນນະພາບ, ສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະນາການຂັ້ນພື້ນຖານໃນສະຖານການສຶກສາກ່ອນໄວຮຽນ ພ້ອມທັງມີນະໂຍບາຍຕໍ່ຄູ ແລະ ບຸກຄະລາກອນການສຶກສາ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ສູນພັດທະນາເດັກ** ໝາຍເຖິງ ສະຖານການສຶກສາກ່ອນໄວຮຽນ ທີ່ຕັ້ງຢູ່ໃນເຂດຊຸມຊົນ ທີ່ບໍ່ມີໂຮງລ້ຽງເດັກ.
2. **ຫຼັກສູດການສຶກສາກ່ອນໄວຮຽນນານາຊາດ** ໝາຍເຖິງ ຫຼັກສູດການຮຽນ-ການສອນ ສຳລັບ ການສຶກສາກ່ອນໄວຮຽນ ຂອງປະເທດໃດໜຶ່ງ ຊຶ່ງເປັນທີ່ຍອມຮັບຂອງສາກົນ.
3. **ຫ້າ ພັດທະນາການຂອງເດັກ** ໝາຍເຖິງ ການສົ່ງເສີມໃຫ້ເດັກມີພັດທະນາການທາງດ້ານຮ່າງກາຍ, ການອະນາໄມ ແລະ ຄວາມປອດໄພ, ພັດທະນາການ ດ້ານອາລົມ-ຈິດໃຈ, ພັດທະນາການ ດ້ານສັງຄົມ, ພັດທະນາການ ດ້ານສະຕິປັນຍາ-ຄວາມຮູ້ທົ່ວໄປ ແລະ ພັດທະນາການ ທາງດ້ານພາສາ.
4. **ເດັກພິການ** ໝາຍເຖິງ ເດັກທີ່ບໍ່ມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ຫຼື ມັນສະໝອງ ທີ່ມີອາຍຸ ແຕ່ສາມເດືອນ ຫາ ຕໍ່າກວ່າ ຫົກ ປີ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານການສຶກສາກ່ອນໄວຮຽນ**

ການເຄື່ອນໄຫວວຽກງານການສຶກສາກ່ອນໄວຮຽນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດການພັດທະນາການສຶກສາກ່ອນໄວຮຽນ, ແຜນຍຸດທະສາດການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ, ແຜນພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແຕ່ລະໄລຍະ;
2. ເຄື່ອນໄຫວຕາມ ສາມ ລັກສະນະ, ຫ້າ ຫຼັກມູນ ການສຶກສາແຫ່ງຊາດ ແລະ ປະຕິບັດຕາມຫຼັກສູດການສຶກສາກ່ອນໄວຮຽນ;
3. ການຮຽນ ໄປຄຽງຄູ່ກັບການຮຽນຮູ້ ແລະ ປະຕິບັດຕົວຈິງ, ຄວາມຕໍ່ເນື່ອງ ແລະ ການກຽມຄວາມພ້ອມເຂົ້າຮຽນຊັ້ນປະຖົມສຶກສາ;
4. ຮັບປະກັນ ຄວາມສະເໝີພາບ, ຖືກຕ້ອງ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
5. ຮັບປະກັນ ການບໍ່ຈຳແນກ ສັນຊາດ, ເຊື້ອຊາດ, ສາສະໜາ, ເຜົ່າ, ເພດ ແລະ ສະຖານະພາບທາງດ້ານຮ່າງກາຍ, ສ້າງເງື່ອນໄຂໃຫ້ເດັກທີ່ດ້ອຍໂອກາດ ແລະ ເດັກພິການ ໄດ້ຮັບການສຶກສາກ່ອນໄວຮຽນ;
6. ຮັບປະກັນການປະສານສົມທົບ ລະຫວ່າງ ການສຶກສາ ໃນ ແລະ ນອກ ໂຮງຮຽນ ກັບການສຶກສາອົບຮົມ ໃນຄອບຄົວ, ຊຸມຊົນ ແລະ ສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານການສຶກສາກ່ອນໄວຮຽນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ໃຫ້ມີການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ດ້ວຍການແລກປ່ຽນບົດຮຽນ, ຍົກລະດັບ ຄວາມຮູ້, ຄວາມສາມາດ ທາງດ້ານວິຊາການ, ເຕັກນິກ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ເພື່ອພັດທະນາວຽກງານການສຶກສາກ່ອນໄວຮຽນ ໃຫ້ມີຄວາມເຂັ້ມແຂງ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ໂຄງປະກອບການສຶກສາກ່ອນໄວຮຽນ

**ມາດຕາ 8 ໂຄງປະກອບການສຶກສາກ່ອນໄວຮຽນ**

ໂຄງປະກອບການສຶກສາກ່ອນໄວຮຽນ ມີ ດັ່ງນີ້:

1. ຊັ້ນລ້ຽງເດັກ;
2. ຊັ້ນອະນຸບານສຶກສາ.

**ມາດຕາ 9 ຊັ້ນລ້ຽງເດັກ**

ຊັ້ນລ້ຽງເດັກ ແມ່ນ ການເບິ່ງແຍງ, ລ້ຽງດູ ແລະ ສົ່ງເສີມການຮຽນຮູ້ຂັ້ນຕົ້ນ, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ ສຳລັບເດັກ ອາຍຸແຕ່ ສາມ ເດືອນ ຫາ ຕໍ່າກວ່າ ສາມ ປີ.

ຊັ້ນລ້ຽງເດັກ ມີ ສາມ ຂັ້ນຮຽນ ດັ່ງນີ້:

1. ຂັ້ນລ້ຽງເດັກອ່ອນ ສຳລັບເດັກອາຍຸ ແຕ່ ສາມ ເດືອນ ຫາ ຕໍ່າກວ່າ ໜຶ່ງ ປີ;
2. ຂັ້ນລ້ຽງເດັກກາງ ສຳລັບເດັກອາຍຸ ແຕ່ ໜຶ່ງ ປີ ຫາ ຕໍ່າກວ່າ ສອງ ປີ;
3. ຂັ້ນລ້ຽງເດັກໃຫຍ່ ສຳລັບເດັກອາຍຸ ແຕ່ ສອງ ປີ ຫາ ຕໍ່າກວ່າ ສາມ ປີ.

**ມາດຕາ 10 ຊັ້ນອະນຸບານສຶກສາ**

ຊັ້ນອະນຸບານສຶກສາ ແມ່ນ ການເບິ່ງແຍງ, ລ້ຽງດູ ແລະ ສົ່ງເສີມ ການຮຽນຮູ້, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ ສຳລັບເດັກ ອາຍຸແຕ່ ສາມ ປີ ຫາ ຕໍ່າກວ່າ ຫົກ ປີ.

ຊັ້ນອະນຸບານສຶກສາ ມີ ສາມ ຂັ້ນຮຽນ ດັ່ງນີ້:

1. ຂັ້ນອະນຸບານ 1 ສຳລັບເດັກອາຍຸ ແຕ່ ສາມ ປີ ຫາ ຕໍ່າກວ່າ ສີ່ ປີ;
2. ຂັ້ນອະນຸບານ 2 ສຳລັບເດັກອາຍຸ ແຕ່ ສີ່ ປີ ຫາ ຕໍ່າກວ່າ ຫ້າ ປີ;
3. ຂັ້ນອະນຸບານ 3 ສຳລັບເດັກອາຍຸ ແຕ່ ຫ້າ ປີ ຫາ ຕໍ່າກວ່າ ຫົກ ປີ.

ສຳລັບຂັ້ນອະນຸບານ 3 ຍັງສາມາດສົ່ງເສີມ ກຸ່ມຮຽນຜ່ານການຫຼິ້ນ ແລະ ການຮຽນຮູ້ ເພື່ອກຽມຄວາມພ້ອມ ກ່ອນການເຂົ້າຮຽນຊັ້ນປະຖົມສຶກສາ ປີທີ 1.

## ໝວດທີ 3
## ສະຖານການສຶກສາກ່ອນໄວຮຽນ

### ມາດຕາ 11 ສະຖານການສຶກສາກ່ອນໄວຮຽນ

ສະຖານການສຶກສາກ່ອນໄວຮຽນ ແມ່ນ ບ່ອນດຳເນີນ ການເບິ່ງແຍງ, ລ້ຽງດູ, ດຳເນີນການຮຽນ-ການສອນ, ສົ່ງເສີມການຮຽນຮູ້, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ.

### ມາດຕາ 12 ປະເພດສະຖານການສຶກສາກ່ອນໄວຮຽນ

ສະຖານການສຶກສາກ່ອນໄວຮຽນ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

1. ສະຖານລ້ຽງເດັກ ແລະ ພັດທະນາເດັກ ເອີ້ນວ່າ ໂຮງລ້ຽງເດັກ ຫຼື ສູນພັດທະນາເດັກ;
2. ສະຖານການຮຽນ-ການສອນ ເດັກອະນຸບານ ເອີ້ນວ່າ ໂຮງຮຽນອະນຸບານ.

ການລ້ຽງເດັກ ແລະ ການຮຽນ-ການສອນ ສາມາດດຳເນີນທັງໃນສະຖານການສຶກສາກ່ອນໄວຮຽນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ເທິງນີ້ ເອີ້ນວ່າ ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ຊຶ່ງຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

### ມາດຕາ 13 ການສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາກ ລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງ ສະຖານການສຶກສາກ່ອນໄວຮຽນ ຕ້ອງໃຫ້ສອດຄ່ອງກັບ ແຜນຍຸດທະສາດການພັດທະນາການສຶກສາກ່ອນໄວຮຽນ ແລະ ແຜນຍຸດທະສາດການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ແຕ່ລະໄລຍະ.

ການສ້າງຕັ້ງ ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

ສຳລັບການສ້າງຕັ້ງ ສະຖານການສຶກສາກ່ອນໄວຮຽນ ພາກລັດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

# ໝວດທີ 4
# ຫຼັກສູດການສຶກສາກ່ອນໄວຮຽນ

**ມາດຕາ 14 ຫຼັກສູດການສຶກສາກ່ອນໄວຮຽນ**

ຫຼັກສູດການສຶກສາກ່ອນໄວຮຽນ ແມ່ນ ເອກະສານທີ່ກຳນົດ ຫຼັກການ, ຈຸດໝາຍ, ໂຄງສ້າງ, ເນື້ອໃນ, ວິທີການ ແລະ ເວລາ ຈັດການຮຽນ-ການສອນ ເພື່ອສົ່ງເສີມຂະບວນການຮຽນຮູ້ ຂອງເດັກ ອາຍຸ ແຕ່ ສາມ ເດືອນ ຫາ ຕໍ່າກວ່າ ຫົກ ປີ ຊຶ່ງປະກອບດ້ວຍ ຫຼັກສູດ ຊັ້ນລ້ຽງເດັກ ແລະ ຊັ້ນອະນຸບານສຶກສາ.

**ມາດຕາ 15 ຫຼັກສູດຊັ້ນລ້ຽງເດັກ**

ຫຼັກສູດຊັ້ນລ້ຽງເດັກ ແມ່ນ ເອກະສານ ກຳນົດຫຼັກການ, ເປົ້າໝາຍ ການເບິ່ງແຍງ, ລ້ຽງດູ ແລະ ສົ່ງເສີມ ການຮຽນຮູ້ຂັ້ນຕົ້ນ, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ ສຳລັບເດັກ ອາຍຸ ແຕ່ ສາມ ເດືອນ ຫາ ຕໍ່າກວ່າ ສາມ ປີ ເພື່ອສົ່ງເສີມ ຫ້າ ພັດທະນາການ ຂອງເດັກ ແລະ ໃຫ້ເດັກ ມີລະບຽບວິໄນຂັ້ນພື້ນຖານ.

**ມາດຕາ 16 ຫຼັກສູດຊັ້ນອະນຸບານສຶກສາ**

ຫຼັກສູດຊັ້ນອະນຸບານສຶກສາ ແມ່ນ ເອກະສານ ກຳນົດຫຼັກການ, ເປົ້າໝາຍ ການເບິ່ງແຍງ, ລ້ຽງດູ ແລະ ສົ່ງເສີມ ການຮຽນຮູ້, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ ສຳລັບເດັກ ອາຍຸ ແຕ່ ສາມ ປີ ຫາ ຕໍ່າກວ່າ ຫົກ ປີ ເພື່ອສົ່ງເສີມ ຫ້າ ພັດທະນາການ ຂອງເດັກ ຕາມ ສາມ ລັກສະນະ ແລະ ຫ້າ ຫຼັກມູນການສຶກສາ.

**ມາດຕາ 17 ການສ້າງ ແລະ ປັບປຸງ ຫຼັກສູດ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບ ສ້າງ ແລະ ປັບປຸງ ຫຼັກສູດການສຶກສາກ່ອນໄວຮຽນ ບົນພື້ນຖານສະພາບຄວາມເປັນຈິງ ໂດຍສອດຄ່ອງກັບແຜນຍຸດທະສາດການພັດທະນາການສຶກສາກ່ອນໄວຮຽນ ແລະ ແຜນຍຸດທະສາດການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ແຕ່ລະໄລຍະ.

ສຳລັບຫຼັກສູດການສຶກສາກ່ອນໄວຮຽນນານາຊາດ ຕ້ອງໄດ້ຮັບການພິຈາລະນາຮັບຮອງ ແລະ ອະນຸມັດ ຈາກ ກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 18 ການອະນຸມັດ ແລະ ການຍົກເລີກ ຫຼັກສູດການສຶກສາກ່ອນໄວຮຽນ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ ແລະ ຍົກເລີກ ຫຼັກສູດການສຶກສາກ່ອນໄວຮຽນ ແຕ່ລະໄລຍະ.

# ໝວດທີ 5
# ການຈັດຕັ້ງການຮຽນ-ການສອນ

## ມາດຕາ 19 ການຈັດຕັ້ງການຮຽນ-ການສອນ

ການຈັດຕັ້ງການຮຽນ-ການສອນ ແມ່ນ ການເບິ່ງແຍງ, ລ້ຽງດູ, ຝຶກແອບ, ສິດສອນ, ຖ່າຍທອດຄວາມຮູ້ ແລະ ສຶກສາອົບຮົມ ຕາມເນື້ອໃນທີ່ກໍານົດໄວ້ໃນຫຼັກສູດການສຶກສາກ່ອນໄວຮຽນ ທີ່ກະຊວງສຶກສາທິການ ແລະ ກິລາ ປະກາດໃຊ້ ໃນແຕ່ລະໄລຍະ.

ການຈັດຕັ້ງການຮຽນ-ການສອນ ມີ ດັ່ງນີ້:

1. ເງື່ອນໄຂການຈັດຕັ້ງການຮຽນ-ການສອນ;
2. ການຮັບນັກຮຽນ;
3. ຮູບແບບການຮຽນ-ການສອນ;
4. ຕໍາລາ ແລະ ເອກະສານ ການຮຽນ-ການສອນ;
5. ພາສາທີ່ນໍາໃຊ້ ໃນການຮຽນ-ການສອນ;
6. ການຄຸ້ມຄອງການຮຽນ-ການສອນ.

## ມາດຕາ 20 ເງື່ອນໄຂການຈັດຕັ້ງການຮຽນ-ການສອນ

ເງື່ອນໄຂການຈັດຕັ້ງການຮຽນ-ການສອນ ມີ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ, ແຜນຍຸດທະສາດການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດແຕ່ລະໄລຍະ;
2. ມີບຸກຄະລາກອນ, ຄູສອນທີ່ມີລະດັບວິຊາສະເພາະ ແລະ ວຸດທິການສຶກສາ ທີ່ເໝາະສົມກັບລະດັບຂອງຫຼັກສູດ ເພື່ອຮັບປະກັນໃຫ້ມີຄຸນນະພາບສູງ;
3. ມີໂຄງລ່າງພື້ນຖານທີ່ສົມບູນ ເປັນຕົ້ນ ສະຖານທີ່, ອາຄານ, ຫ້ອງຮຽນ, ວັດຖຸປະກອນ, ຕໍາລາ ແລະ ເອກະສານຮັບໃຊ້ການຮຽນ-ການສອນ ຢ່າງພຽງພໍ ແລະ ເໝາະສົມ;
4. ມີຫຼັກສູດການສຶກສາກ່ອນໄວຮຽນ;
5. ມີເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

## ມາດຕາ 21 ການຮັບນັກຮຽນ

ການຮັບນັກຮຽນ ແມ່ນ ການບັນຈຸເດັກ ເຂົ້າຮຽນ ໃນຊັ້ນລ້ຽງເດັກ ແລະ ຊັ້ນອະນຸບານ ໃຫ້ປະຕິບັດ ດັ່ງນີ້:

1. ຊັ້ນລ້ຽງເດັກ:
   1.1 ຂັ້ນລ້ຽງເດັກອ່ອນ ບັນຈຸເດັກ ສາມ ຄົນ ຕໍ່ ຄູ ໜຶ່ງ ຄົນ ແລະ ບໍ່ໃຫ້ເກີນ ສິບຫ້າ ຄົນ ຕໍ່ຫ້ອງ;
   1.2 ຂັ້ນລ້ຽງເດັກກາງ ບັນຈຸເດັກ ຫ້າ ຄົນ ຕໍ່ ຄູ ໜຶ່ງ ຄົນ ແລະ ບໍ່ໃຫ້ເກີນ ຊາວ ຄົນ ຕໍ່ຫ້ອງ;
   1.3 ຂັ້ນລ້ຽງເດັກໃຫຍ່ ບັນຈຸເດັກ ສິບ ຄົນ ຕໍ່ ຄູ ໜຶ່ງ ຄົນ ແລະ ບໍ່ໃຫ້ເກີນ ຊາວຫ້າ ຄົນ ຕໍ່ຫ້ອງ.
2. ຊັ້ນອະນຸບານ:
   2.1 ຂັ້ນອະນຸບານ 1 ບັນຈຸເດັກ ສິບຫ້າ ຄົນ ຕໍ່ຄູ ໜຶ່ງ ຄົນ ແລະ ບໍ່ໃຫ້ເກີນ ຊາວຫ້າ ຄົນ ຕໍ່ຫ້ອງ;

2.2 ຂັ້ນອະນຸບານ 2 ບັນຈຸເດັກ ຊາວ ຄົນ ຕໍ່ຄູ ໜຶ່ງຄົນ ແລະ ບໍ່ໃຫ້ເກີນ ສາມສິບ ຄົນ ຕໍ່ຫ້ອງ;;

2.3 ຂັ້ນອະນຸບານ 3 ບັນຈຸເດັກ ຊາວຫ້າ ຄົນ ຕໍ່ຄູ ໜຶ່ງຄົນ ແລະ ບໍ່ໃຫ້ເກີນ ສາມສິບຫ້າ ຄົນ ຕໍ່ຫ້ອງ.

ສຳລັບການຮຽນຮູ້ເພື່ອກຽມຄວາມພ້ອມ ກ່ອນການເຂົ້າຮຽນຊັ້ນປະຖົມສຶກສາປີທີ 1 ບັນຈຸເດັກ ຊາວ ຫາ ຊາວຫ້າ ຄົນ ຕໍ່ຄູ ໜຶ່ງຄົນ, ສ່ວນກຸ່ມຮຽນຜ່ານການຫຼິ້ນ ແລະ ການຮຽນຮູ້ ບັນຈຸເດັກ ສິບ ຫາ ສິບຫ້າ ຄົນ ຕໍ່ຜູ້ດູແລເດັກ ສອງຄົນ.

### ມາດຕາ 22 ຮູບແບບການຈັດຕັ້ງການຮຽນ-ການສອນ

ຮູບແບບການຈັດຕັ້ງການຮຽນ-ການສອນ ມີ ດັ່ງນີ້:

1. ຮູບແບບເຕັມເວລາ ຊຶ່ງແມ່ນການຈັດຕັ້ງການຮຽນ-ການສອນ ຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ຈັດຕັ້ງການຮຽນ-ການສອນ ສູງສຸດບໍ່ໃຫ້ເກີນ ຫົກ ຊົ່ວໂມງຕໍ່ວັນ ຫຼື ສາມສິບ ຊົ່ວໂມງຕໍ່ອາທິດ;
2. ຮູບແບບບໍ່ເຕັມເວລາ ຊຶ່ງແມ່ນການຈັດຕັ້ງການຮຽນ-ການສອນ ຢູ່ເຂດທີ່ບໍ່ມີ ສະຖານການສຶກສາກ່ອນໄວຮຽນ ໃຫ້ຈັດຕັ້ງການຮຽນ-ການສອນ ສູງສຸດບໍ່ໃຫ້ເກີນ ສີ່ ຊົ່ວໂມງຕໍ່ວັນ ຫຼື ຊາວ ຊົ່ວໂມງຕໍ່ອາທິດ.

### ມາດຕາ 23 ຕຳລາ ແລະ ເອກະສານ ການຮຽນ-ການສອນ

ສະຖານການສຶກສາກ່ອນໄວຮຽນ ພາກ ລັດ, ເອກະຊົນ ແລະ ເອກະຊົນນານາຊາດ ນຳໃຊ້ຕຳລາ ແລະ ເອກະສານ ທີ່ໄດ້ຮັບການອະນຸມັດ ໂດຍ ກະຊວງສຶກສາທິການ ແລະ ກິລາ ເຂົ້າໃນການຈັດຕັ້ງ ການຮຽນ-ການສອນ.

ຕຳລາ ແລະ ເອກະສານ ການຮຽນ-ການສອນ ຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ນຳໃຊ້ ດັ່ງນີ້:

1. ຊັ້ນລ້ຽງເດັກ:

- ຫຼັກສູດຊັ້ນລ້ຽງເດັກ;
- ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ ອາຍຸ ສາມ ເດືອນ ຫາ ສາມສິບຫົກ ເດືອນ;
- ແຜນຈັດປະສົບການຊັ້ນລ້ຽງເດັກ;
- ປຶ້ມຮຽກຊື່ ແລະ ບັນທຶກຕິດຕາມພັດທະນາການ;
- ປຶ້ມຕິດຕາມພັດທະນາການ.

2. ຊັ້ນອະນຸບານ:

- ຫຼັກສູດຊັ້ນອະນຸບານສຶກສາ;
- ແຜນຈັດປະສົບການ ສຳລັບ ຊັ້ນອະນຸບານ;
- ຄູ່ມືຄູ ການຈັດກິດຈະກຳ ການຮຽນ-ການສອນ ແລະ ຕິດຕາມປະເມີນຜົນ;
- ຄູ່ມືຄູ ກິດຈະກຳ ເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນຕາມມູມ ແລະ ການຫຼິ້ນກາງແຈ້ງ;
- ປຶ້ມບົດຝຶກຫັດ ຕາມໜ່ວຍການສອນ;
- ປຶ້ມບົດຝຶກຫັດພາສາລາວ;
- ປຶ້ມບົດຝຶກຫັດຄະນິດສາດ;
- ປຶ້ມຮຽກຊື່ ແລະ ບັນທຶກພັດທະນາການເດັກ;
- ປຶ້ມຕິດຕາມພັດທະນາການເດັກ.

ນອກຈາກ ຕຳລາ ແລະ ເອກະສານ ການຮຽນ-ການສອນ ຕາມທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ສະຖານການສຶກສາກ່ອນໄວຮຽນ ຍັງສາມາດນຳໃຊ້ເຄື່ອງມື ສຳລັບການຮຽນ-ການສອນ ຊຶ່ງປະກອບດ້ວຍ ສື່ສິ່ງພິມ, ສື່ເຕັກໂນໂລຊີ, ສື່ວັດສະດຸ, ເຄື່ອງມື, ອຸປະກອນ ແລະ ສື່ອື່ນ ເຂົ້າໃນການຈັດຕັ້ງການຮຽນ-ການສອນ ຕາມເງື່ອນໄຂຕົວຈິງ.

**ມາດຕາ 24 ພາສາທີ່ໃຊ້ໃນການຮຽນ-ການສອນ ຢູ່ສະຖານການສຶກສາກ່ອນໄວຮຽນ**

ພາສາ ທີ່ໃຊ້ເຂົ້າໃນການຮຽນ-ການສອນ ຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ນຳໃຊ້ພາສາລາວ ແລະ ອັກສອນລາວ ຕາມຫຼັກສູດ ຊັ້ນລ້ຽງເດັກ ແລະ ຊັ້ນອະນຸບານສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

**ມາດຕາ 25 ການຄຸ້ມຄອງ ການຮຽນ-ການສອນ**

ການຄຸ້ມຄອງ ການຮຽນ-ການສອນ ຂອງສະຖານການສຶກສາກ່ອນໄວຮຽນ ໃຫ້ປະຕິບັດດັ່ງນີ້:

1. ຄຸ້ມຄອງ ແລະ ຈັດຕັ້ງ ການຮຽນ-ການສອນ ຕາມຫຼັກສູດການສຶກສາກ່ອນໄວຮຽນ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
2. ປະຕິບັດຕາມການແບ່ງຂັ້ນຄຸ້ມຄອງໂດຍການມີສ່ວນຮ່ວມ ຂອງອຳນາດການປົກຄອງ ແລະ ຊຸມຊົນໃນທ້ອງຖິ່ນ;
3. ມີການປະກັນຄຸນນະພາບ, ການກວດກາ ແລະ ການປະເມີນ ການຈັດ ການຮຽນ-ການສອນ;
4. ຄຸ້ມຄອງ ຄູ ແລະ ນັກຮຽນ ຕາມລະບຽບຫຼັກການຢ່າງເຂັ້ມງວດ.

## ໝວດທີ 6
## ນັກຮຽນ

**ມາດຕາ 26 ນັກຮຽນ**

ນັກຮຽນ ແມ່ນ ຜູ້ຮຽນ ໃນສະຖານການສຶກສາກ່ອນໄວຮຽນ ຊຶ່ງໄດ້ຮັບການເບິ່ງແຍງ, ລ້ຽງດູ ແລະ ສົ່ງເສີມການຮຽນຮູ້, ການຫຼິ້ນ ແລະ ການຝຶກປະຕິບັດຕົວຈິງ.

**ມາດຕາ 27 ສິດ ຂອງນັກຮຽນ**

ສິດ ຂອງນັກຮຽນ ມີ ດັ່ງນີ້:

1. ເຂົ້າຮ່ວມກິດຈະກຳ ການຮຽນ-ການສອນ;
2. ໄດ້ຮັບການເບິ່ງແຍງ, ລ້ຽງດູ, ສົ່ງເສີມການຮຽນຮູ້, ການຫຼິ້ນ ແລະ ການຝຶກແອບປະຕິບັດຕົວຈິງ;
3. ໄດ້ຮັບການສົ່ງເສີມສຸຂະພາບ ແລະ ສຸຂານາໄມ ໃນສະຖານການສຶກສາກ່ອນໄວຮຽນ;
4. ໄດ້ຮັບການປົກປ້ອງຈາກທຸກຮູບແບບ ການໃຊ້ຄວາມຮຸນແຮງ ທາງດ້ານຮ່າງກາຍ ແລະ ຈິດໃຈ ໃນສະຖານການສຶກສາກ່ອນໄວຮຽນ;
5. ໄດ້ຮັບໃບຢັ້ງຢືນ, ໃບຍົກຍ້າຍ, ປຶ້ມຕິດຕາມ ແລະ ບັນທຶກພັດທະນາການຂອງເດັກ ຢ່າງເປັນປົກກະຕິ;
6. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ການອຸດໜູນນັກຮຽນ**

ນັກຮຽນທີ່ມາຈາກຄອບຄົວທຸກຍາກ, ຜູ້ດ້ອຍໂອກາດ, ເດັກພິການ ແລະ ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານການຮຽນ ໂດຍສະເພາະເພດຍິງ ແລະ ເຜົ່າ ໄດ້ຮັບການອຸດໜູນ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ຕ້ອງມີສ່ວນຮ່ວມ ແລະ ໃຫ້ການຮ່ວມມື ໃນການຊຸກຍູ້ ແລະ ຊ່ວຍເຫຼືອນັກຮຽນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ ໂດຍສະເພາະສ້າງເງື່ອນໄຂໃຫ້ເດັກພິການ ໄດ້ເຂົ້າຮຽນຮ່ວມກັບນັກຮຽນປົກກະຕິ.

**ມາດຕາ 29 ຄວາມສະເໝີພາບຂອງນັກຮຽນ**

ນັກຮຽນ ໂດຍບໍ່ຈຳແນກເພດ, ໄວ, ເຜົ່າ, ຄວາມເປັນພິການ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ລ້ວນແຕ່ມີຄວາມສະເໝີພາບໃນການໄດ້ຮັບການເບິ່ງແຍງ, ລ້ຽງດູ, ສົ່ງເສີມການຮຽນຮູ້, ການຫຼິ້ນ ແລະ ການຝຶກແອບປະຕິບັດຕົວຈິງ ເພື່ອສົ່ງເສີມພັດທະນາການຂອງນັກຮຽນ ໃນສະຖານການສຶກສາກ່ອນໄວຮຽນ.

## ໝວດທີ 7
## ຄູ ແລະ ບຸກຄະລາກອນ ການສຶກສາກ່ອນໄວຮຽນ

**ມາດຕາ 30 ຄູ ຢູ່ສະຖານການສຶກສາກ່ອນໄວຮຽນ**

ຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ແມ່ນ ຜູ້ປະຕິບັດໜ້າທີ່ ເບິ່ງແຍງ, ລ້ຽງດູ, ຝຶກແອບ, ສິດສອນ, ຖ່າຍທອດຄວາມຮູ້ ແລະ ສຶກສາອົບຮົມ ໃນຊັ້ນລ້ຽງເດັກ ແລະ ຊັ້ນອະນຸບານ ໃນສະຖານການສຶກສາກ່ອນໄວຮຽນ.

**ມາດຕາ 31 ບຸກຄະລາກອນ ການສຶກສາກ່ອນໄວຮຽນ**

ບຸກຄະລາກອນ ການສຶກສາກ່ອນໄວຮຽນ ແມ່ນ ຜູ້ປະຕິບັດໜ້າທີ່ ໃນການນຳພາ, ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃນສະຖານການສຶກສາກ່ອນໄວຮຽນ.

**ມາດຕາ 32 ມາດຕະຖານ ຄູ ແລະ ບຸກຄະລາກອນ ການສຶກສາກ່ອນໄວຮຽນ**

ຄູ ການສຶກສາກ່ອນໄວຮຽນ ມີມາດຕະຖານ ດັ່ງນີ້:

1. ມີຫຼັກໝັ້ນ, ມີທັດສະນະການເມືອງຖືກຕ້ອງ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄຸນສົມບັດ, ມີຈັນຍາບັນ, ມີມະນຸດສຳພັນທີ່ດີ, ຮັກອາຊີບແພງເດັກ ແລະ ເປັນແບບຢ່າງທີ່ດີ;
2. ມີຄວາມຮູ້, ຄວາມສາມາດ, ທາງດ້ານວິຊາສະເພາະ ແລະ ວິຊາຊີບຄູ ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນການບໍລິຫານ ຢ່າງຖືກຕ້ອງ;
3. ມີຄວາມສາມາດໃນການບໍລິຫານ, ການວັດຜົນ, ການປະເມີນຜົນ ແລະ ການຈັດການຮຽນ-ການສອນຂອງຄູ ແລະ ນັກຮຽນ;
4. ມີສຸຂະພາບດີ.

ບຸກຄະລາກອນ ການສຶກສາກ່ອນໄວຮຽນ ມີມາດຕະຖານ ດັ່ງນີ້:

1. ມີຫຼັກໝັ້ນ, ມີທັດສະນະການເມືອງຖືກຕ້ອງ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄຸນສົມບັດ, ມີຈັນ

ຍາບັນ, ມີມະນຸດສຳພັນທີ່ດີ, ຮັກອາຊີບ ແລະ ເປັນແບບຢ່າງທີ່ດີ;

2. ມີຄວາມຮູ້, ຄວາມສາມາດ, ທາງດ້ານວິຊາສະເພາະ ແລະ ວິຊາຊີບຄູ ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນ ການບໍລິຫານ ຢ່າງຖືກຕ້ອງ;

3. ມີຄວາມສາມາດໃນການບໍລິຫານ, ການວັດຜົນ, ການປະເມີນຜົນ ແລະ ການຈັດການຮຽນ-ການສອນ ຂອງຄູ ແລະນັກຮຽນ;

4. ມີສຸຂະພາບດີ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຄູ ຢູ່ສະຖານການສຶກສາກ່ອນໄວຮຽນ**

ຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ບົດສອນຂອງຕົນ ໃຫ້ສອດຄ່ອງກັບສະພາບການປ່ຽນແປງດ້ານຕ່າງໆ ໃນແຕ່ລະໄລຍະ;

2. ສິດສອນ ຕາມຫຼັກສູດການສຶກສາກ່ອນໄວຮຽນທີ່ກຳນົດ;

3. ໄດ້ຮັບການບຳລຸງ ແລະ ຍົກລະດັບດ້ານວິຊາການ ທີ່ກ່ຽວຂ້ອງກັບໜ້າທີ່ ແລະ ວິຊາສະເພາະ ຂອງຕົນ;

4. ຄົ້ນຄວ້າ ແລະ ເຂົ້າຮ່ວມການຄົ້ນຄວ້າວິທະຍາສາດ ທີ່ກ່ຽວຂ້ອງກັບວິຊາສະເພາະ ຂອງຕົນ;

5. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ນະໂຍບາຍ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

6. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ຂອງ ສະຖານການສຶກສາກ່ອນໄວຮຽນ, ຊຸມຊົນ ແລະ ສັງຄົມ;

7. ປະສານສົມທົບກັບ ພໍ່ແມ່, ຜູ້ປົກຄອງ ແລະ ຄະນະພັດທະນາການສຶກສາຂັ້ນຕ່າງໆ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

8. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີຂອງຕົນ;

9. ຕິດຕາມ, ກວດກາ, ຕີລາຄາ, ວັດຜົນ ແລະ ປະເມີນຜົນ ກ່ຽວກັບການຮຽນ-ການສອນ ຢ່າງເປັນປະຈຳ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ**

ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດໜ້າທີ່ ຕາມຂອບເຂດສິດ ທີ່ການຈັດຕັ້ງ ແລະ ສະຖານການສຶກສາກ່ອນໄວຮຽນ ທີ່ຕົນສັງກັດ ມອບໝາຍໃຫ້;

2. ໄດ້ຮັບການບຳລຸງ ແລະ ຍົກລະດັບດ້ານວິຊາການ ທີ່ກ່ຽວຂ້ອງກັບໜ້າທີ່ ແລະ ວິຊາສະເພາະ ຂອງຕົນ;

3. ປະກອບຄຳເຫັນ ກ່ຽວກັບການພັດທະນາວຽກງານການສຶກສາກ່ອນໄວຮຽນ;

4. ໄດ້ຮັບຂໍ້ມູນ ຂ່າວສານ ແລະ ນະໂຍບາຍ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

5. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ຂອງ ສະຖານການສຶກສາກ່ອນໄວຮຽນ, ຊຸມຊົນ ແລະ ສັງຄົມ;

6. ປະສານສົມທົບກັບ ພໍ່ແມ່, ຜູ້ປົກຄອງ ແລະ ຄະນະພັດທະນາການສຶກສາຂັ້ນຕ່າງໆ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

7. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ.

**ມາດຕາ 35 ນາມມະຍົດ ແລະ ຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາກ່ອນໄວຮຽນ**

ນາມມະຍົດຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນລະບຽບການ ກ່ຽວກັບ ນາມມະຍົດຂອງຄູ ແຫ່ງ ສປປ ລາວ ແຕ່ລະໄລຍະ

ຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ ໃນລະບຽບການກ່ຽວກັບ ຕຳແໜ່ງວິຊາການຄູ ໃນລະດັບຕ່ຳກວ່າ ສະຖາບັນການສຶກສາຊັ້ນສູງ ແຕ່ລະໄລຍະ.

## ໝວດທີ 8
## ການສົ່ງເສີມວຽກງານການສຶກສາກ່ອນໄວຮຽນ

**ມາດຕາ 36 ການສົ່ງເສີມ ວຽກງານການສຶກສາກ່ອນໄວຮຽນ**

ການສົ່ງເສີມ ວຽກງານການສຶກສາກ່ອນໄວຮຽນ ມີ ດັ່ງນີ້:

1. ການພັດທະນາວິຊາຊີບຄູ;
2. ການປະຕິບັດນະໂຍບາຍອຸດໜູນຄູ;
3. ການມີສ່ວນຮ່ວມ ແລະ ຄວາມຮັບຜິດຊອບຂອງ ພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນ;
4. ການເຂົ້າຮຽນຂອງເດັກ;
5. ການອະນາໄມ, ການຮັກສາສຸຂະພາບ, ໂພຊະນາການ ແລະ ການໃຫ້ວັກຊີນກັນພະຍາດ.

**ມາດຕາ 37 ການພັດທະນາວິຊາຊີບຄູ**

ການພັດທະນາວິຊາຊີບຄູ ແມ່ນ ການຝຶກອົບຮົມ ແລະ ການຍົກລະດັບຄູຢູ່ສະຖານການສຶກສາກ່ອນໄວຮຽນ ໃຫ້ມີ ຫຼັກໝັ້ນ, ມີທັດສະນະການເມືອງທີ່ຖືກຕ້ອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້, ຄວາມສາມາດ ດ້ານວິຊາສະເພາະ, ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ເພື່ອໃຫ້ການພັດທະນາວິຊາຊີບຄູ ມີຄວາມຕໍ່ເນື່ອງ.

**ມາດຕາ 38 ການປະຕິບັດນະໂຍບາຍອຸດໜູນຄູ**

ການປະຕິບັດນະໂຍບາຍອຸດໜູນຄູ ມີ ດັ່ງນີ້:

1. ເງິນເດືອນ;
2. ການອຸດໜູນວິຊາຊີບຄູ;
3. ການອຸດໜູນຕຳແໜ່ງວິຊາການ;
4. ການອຸດໜູນນາມມະຍົດຄູ;
5. ການອຸດໜູນປະກັນສັງຄົມ.

ການປະຕິບັດນະໂຍບາຍອຸດໜູນຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ພາກລັດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ, ສຳລັບ ການປະຕິບັດນະໂຍບາຍອຸດໜູນຄູ ຢູ່ສະຖານການສຶກສາກ່ອນໄວຮຽນ ພາກເອກະ

ຊົນ ໃຫ້ປະຕິບັດຕາມລະບຽບການຂອງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ແຕ່ລະປະເພດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 39 ການມີສ່ວນຮ່ວມ ຂອງພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນ**

ການສົ່ງເສີມການມີສ່ວນຮ່ວມ ແລະ ຄວາມຮັບຜິດຊອບຂອງ ພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນ ປະກອບສ່ວນ ແລະ ມີສ່ວນຮ່ວມ ໃນວຽກງານການສຶກສາກ່ອນໄວຮຽນ ເພື່ອໃຫ້ເດັກໄດ້ເຂົ້າຮຽນຕາມເກນອາຍຸ ແລະ ບໍ່ໃຫ້ມີບັນຫາ ກ່ຽວກັບ ການພັດທະນາການຂອງເດັກ, ການຂາດຮຽນ, ການປະລະການຮຽນ ແລະ ການອອກໂຮງຮຽນກາງສົກຮຽນ.

ພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນ ຍັງສາມາດປະກອບສ່ວນທາງດ້ານ ແຮງງານ, ທຶນ, ວັດຖຸປະກອນ ເພື່ອປົກປັກຮັກສາສະພາບແວດລ້ອມ ຂອງສະຖານການສຶກສາກ່ອນໄວຮຽນ ລວມທັງການກໍ່ສ້າງສ້ອມແປງ ອາຄານຂອງສະຖານການສຶກສາກ່ອນໄວຮຽນ.

**ມາດຕາ 40 ການເຂົ້າຮຽນຂອງເດັກ**

ການເຂົ້າຮຽນ ຂອງເດັກ ມີ ດັ່ງນີ້:

1. ການ ສ້າງເງື່ອນໄຂ, ອໍານວຍຄວາມສະດວກ, ປຸກລະດົມ ແລະ ຂົນຂວາຍ ເດັກເຂົ້າຮຽນ;

2. ການ ຊຸກຍູ້, ສົ່ງເສີມ ການມີສ່ວນຮ່ວມຂອງພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນ ໃນການສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ເດັກໄດ້ເຂົ້າຮຽນ;

3. ການ ສົ່ງເສີມ ຕໍາລາ ແລະ ເອກະສານ ການຮຽນ-ການສອນ ລວມທັງ ເຄື່ອງມື ສໍາລັບ ການຮຽນ-ການສອນ ເປັນຕົ້ນ ສື່ ສິ່ງພິມ, ເຕັກໂນໂລຊີ, ເຄື່ອງຫຼິ້ນ.

**ມາດຕາ 41 ການອະນາໄມ, ການຮັກສາສຸຂະພາບ, ໂພຊະນາການ ແລະ ການໃຫ້ວັກຊີນກັນພະຍາດ.**

ການອະນາໄມ, ການຮັກສາສຸຂະພາບ, ໂພຊະນາການ ແລະ ການໃຫ້ວັກຊີນກັນພະຍາດ ໃນສະຖານການສຶກສາກ່ອນໄວຮຽນ ມີ ດັ່ງນີ້:

1. ການສົ່ງເສີມ ການອະນາໄມ;
2. ການສົ່ງເສີມ ສຸຂະພາບ, ສຸຂານາໄມ ແລະ ນໍ້າສະອາດ;
3. ການສົ່ງເສີມ ການກິນອາຫານ, ເຄື່ອງດື່ມທີ່ປອດໄພ ແລະ ຖືກຫຼັກໂພຊະນາການ;
4. ການສົ່ງເສີມ ການໃຫ້ວັກຊີນກັນພະຍາດ.

## ໝວດທີ 9

## ການດໍາເນີນກິດຈະການສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ

**ມາດຕາ 42 ການອະນຸຍາດສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ**

ການອະນຸຍາດສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃບອະນຸຍາດສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ມີອາຍຸ ສອງປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ ບໍ່ສາມາດ ໂອນ ຫຼື ມອບ ໃຫ້ບຸກຄົນອື່ນນໍາໃຊ້.

**ມາດຕາ 43 ການຂະຫຍາຍ, ໂຮມ, ແຍກ ຫຼື ຍົກລະດັບ ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ**

ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ທີ່ມີຈຸດປະສົງ ຂະຫຍາຍ, ໂຮມ, ແຍກ ຫຼື ຍົກລະດັບ ການຈັດຕັ້ງພາຍໃນສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ປະກອບ ເອກະສານ ຂໍອະນຸຍາດ ຈາກຂະແໜງການສຶກສາທິການ ແລະ ກິລາ ຕາມລະບຽບການ.

**ມາດຕາ 44 ການຕໍ່ໃບອະນຸຍາດສ້າງຕັ້ງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ**

ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຕໍ່ໃບອະນຸຍາດ ສ້າງຕັ້ງ ຕ້ອງປະກອບເອກະສານ, ປະຕິບັດຕາມ ຂັ້ນຕອນ ແລະ ເງື່ອນໄຂ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

**ມາດຕາ 45 ການໂຈະສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ**

ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເຄື່ອນໄຫວບໍ່ຖືກກັບ ພາລະບົດບາດ ແລະ ຈຸດປະສົງ ເປົ້າໝາຍ ຂອງສະຖານການສຶກສາກ່ອນໄວຮຽນ;
2. ບໍ່ປັບປຸງ ຫຼື ບໍ່ພັດທະນາຄຸນນະພາບ ຕາມການແນະນໍາ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
3. ມີຄໍາຮ້ອງຂໍໂຈະ ດ້ວຍຄວາມສະໝັກໃຈ ຂອງສະຖານການສຶກສາກ່ອນໄວຮຽນ ຫຼື ຕາມການສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ການຍຸບເລີກສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ**

ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ ຈະຖືກຍຸບເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ບໍ່ແກ້ໄຂ, ບໍ່ປັບປຸງ ຂໍ້ຜິດພາດ ໃນການດໍາເນີນກິດຈະການ ທີ່ຂັດກັບກົດໝາຍ ແລະ ລະບຽບການທີ່ ກ່ຽວຂ້ອງ;
3. ມີຄໍາຮ້ອງຂໍຍຸບເລີກ ດ້ວຍຄວາມສະໝັກໃຈຂອງຕົນ ຫຼື ຕາມການສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ຖືກຖອນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ;
5. ຖືກສານປະຊາຊົນຕັດສິນໃຫ້ຍຸບເລີກ;
6. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ໝວດທີ 10
# ການລົງທຶນໃສ່ການສຶກສາກ່ອນໄວຮຽນ

### ມາດຕາ 47 ການລົງທຶນ ຂອງລັດ

ການລົງທຶນ ຂອງລັດ ແມ່ນ ການສະໜອງງົບປະມານ ໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ, ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງພາຫະນະ, ວັດຖຸປະກອນ, ສື່ການຮຽນ-ການສອນ, ສິ່ງອຳນວຍຄວາມສະດວກ ສຳລັບການສຶກສາກ່ອນໄວຮຽນ ບົນພື້ນຖານ ແຜນການ, ແຜນງານ ແລະ ໂຄງການ ລະອຽດ ເພື່ອຮັບປະກັນໃຫ້ການລົງທຶນດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 48 ແຫຼ່ງທຶນ ສຳລັບການສຶກສາກ່ອນໄວຮຽນ ຂອງລັດ

ແຫຼ່ງທຶນ ສຳລັບການສຶກສາກ່ອນໄວຮຽນ ຂອງລັດ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ ພາຍໃນ ແລະ ຕ່າງປະເທດ;
3. ການຊ່ວຍເຫຼືອ, ການສະໜັບສະໜູນ ຈາກຊຸມຊົນ, ບຸກຄົນ, ນິຕິບຸກ ແລະ ຄອບຄົວ;
4. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 49 ການລົງທຶນພາກເອກະຊົນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ລົງທຶນໃສ່ວຽກງານການສຶກສາກ່ອນໄວຮຽນ ລວມທັງ ການລົງທຶນສ້າງຕັ້ງ ສະຖານການສຶກສາກ່ອນໄວຮຽນນານາຊາດ ໃຫ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 50 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ລັດ ສົ່ງເສີມ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຂົ້າໃສ່ການສຶກສາກ່ອນໄວຮຽນ.

ສຳລັບຂັ້ນຕອນ ແລະ ເງື່ອນໄຂ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ໝວດທີ 11
# ການປະກັນຄຸນນະພາບ ການສຶກສາກ່ອນໄວຮຽນ

### ມາດຕາ 51 ການປະກັນຄຸນນະພາບການສຶກສາກ່ອນໄວຮຽນ

ການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ແມ່ນ ການກຳນົດ ມາດຕະຖານ, ການຕິດຕາມ, ການກວດກາ, ການປະເມີນຜົນ ແລະ ການກວດສອບ ຄຸນນະພາບການສຶກສາກ່ອນໄວຮຽນ ດ້ວຍກົນໄກການປະກັນຄຸນນະພາບ ພາຍໃນ ແລະ ພາຍນອກ ໂດຍມີຈຸດປະສົງ ເພື່ອຮັບຮອງ ແລະ ຢັ້ງຢືນ ຜົນການຮຽນ-ການສອນ ຂອງສະຖານການສຶກ

ສາກ່ອນໄວຮຽນ ເພື່ອສ້າງຄວາມເຊື່ອໝັ້ນ ໃຫ້ແກ່ ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງ, ດຶງດູດຄວາມສົນໃຈ ຕໍ່ຜົນການຮຽນ-ການສອນ ຢູ່ສະຖານການສຶກສາກ່ອນໄວຮຽນ ເຮັດໃຫ້ຜົນການຮຽນ-ການສອນ ດັ່ງກ່າວ ມີມາດຕະຖານເທົ່າທຽມ ມາດຕະຖານພາກພື້ນ ແລະ ສາກົນ.

**ມາດຕາ 52 ກົນໄກການປະກັນຄຸນນະພາບການສຶກສາກ່ອນໄວຮຽນ**

ກົນໄກການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ແມ່ນ ຂັ້ນຕອນການດຳເນີນງານທີ່ພົວພັນ ແລະ ເຊື່ອມໂຍງກັນຢ່າງເປັນລະບົບ ເປັນຕົ້ນ ການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ, ການທົບທວນ ໂດຍນຳໃຊ້ບຸກຄະລາກອນ, ຊັບພະຍາກອນ, ຫຼັກການ, ມາດຕະການ, ທິດທາງປະຕິບັດ ເພື່ອໃຫ້ບັນລຸເປົ້າໝາຍ.

ກົນໄກການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ປະກອບດ້ວຍ:

1. ການປະກັນຄຸນນະພາບພາຍໃນ;
2. ການປະກັນຄຸນນະພາບພາຍນອກ.

**ມາດຕາ 53 ການປະກັນຄຸນນະພາບພາຍໃນ**

ການປະກັນຄຸນນະພາບພາຍໃນ ແມ່ນ ການຕິດຕາມ, ການກວດກາ, ການປະເມີນຜົນ, ການກວດສອບ ແລະ ການປັບປຸງ ຄຸນນະພາບການສຶກສາກ່ອນໄວຮຽນ ໂດຍສະຖານການສຶກສາກ່ອນໄວຮຽນ ເອງ ຫຼື ການຈັດຕັ້ງ ທີ່ຄຸ້ມຄອງສະຖານການສຶກສາ ນັ້ນ.

ການປະກັນຄຸນນະພາບພາຍໃນ ປະກອບດ້ວຍ ການປະເມີນຕົນເອງ ແລະ ປະເມີນພາຍໃນ.

ສະຖານການສຶກສາກ່ອນໄວຮຽນ ຕ້ອງດຳເນີນການປະເມີນຕົນເອງ ທຸກປີ ເພື່ອເປັນບ່ອນອີງ ໃຫ້ແກ່ການປະກັນຄຸນນະພາບ ພາຍໃນ.

ການປະກັນຄຸນນະພາບພາຍໃນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

**ມາດຕາ 54 ການປະກັນຄຸນນະພາບພາຍນອກ**

ການປະກັນຄຸນນະພາບພາຍນອກ ແມ່ນ ການຕິດຕາມ, ກວດກາ, ປະເມີນຜົນ, ການກວດສອບ ແລະ ການປັບປຸງ ຄຸນນະພາບການສຶກສາກ່ອນໄວຮຽນ ໂດຍນຳໃຊ້ຜູ້ປະເມີນພາຍນອກ ໃນແຕ່ລະທ້ອງຖິ່ນ ທີ່ຜ່ານການຝຶກອົບຮົມ ກ່ຽວກັບການປະເມີນຄຸນນະພາບການສຶກສາກ່ອນໄວຮຽນ ບົນພື້ນຖານການປະສານສົມທົບຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແລະ ກະຊວງສຶກສາທິການ ແລະ ກິລາ ຕາມແຕ່ລະກໍລະນີ.

ສະຖານການສຶກສາກ່ອນໄວຮຽນ ຕ້ອງດຳເນີນການປະເມີນພາຍນອກ ຢ່າງໜ້ອຍ ໜຶ່ງ ຄັ້ງ ໃນທຸກ ຫ້າ ປີ ເພື່ອເປັນ ມາດຕະການຮັບປະກັນຜົນປະໂຫຍດ ຂອງນັກຮຽນ ໂດຍມີການຮັບຮອງ ແລະ ການຢັ້ງຢືນ ຄຸນນະພາບ ຈາກກະຊວງສຶກສາທິການ ແລະ ກິລາ.

ການປະກັນຄຸນນະພາບພາຍນອກ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

**ມາດຕາ 55 ການຮັບຮອງ ແລະ ການຢັ້ງຢືນ ຄຸນນະພາບ**

ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການສັງລວມ ການປະເມີນຄຸນນະພາບພາຍນອກ ທີ່ໄດ້ຮັບຈາກຜູ້ປະເມີນພາຍນອກ ເພື່ອນຳສະເໜີ ກະຊວງສຶກສາທິການ ແລະ ກິລາ ພິຈາລະນາຮັບຮອງ ແລະ ຢັ້ງຢືນຄຸນນະພາບສະຖານການສຶກສາກ່ອນໄວຮຽນ.

## ໝວດທີ 12
## ຂໍ້ຫ້າມ

**ມາດຕາ 56 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການ ກ່ຽວກັບການສຶກສາກ່ອນໄວຮຽນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂັດຂວາງການເຄື່ອນໄຫວວຽກງານ ແລະ ກິດຈະກຳ ກ່ຽວກັບການສຶກສາກ່ອນໄວຮຽນ;
3. ໃຫ້, ຮັບ, ທວງເອົາ, ຂໍເອົາ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;
4. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ໝູ່ເພື່ອນ;
5. ເຄື່ອນໄຫວ ທີ່ເປັນການແຕະຕ້ອງເຖິງກຽດສັກສີ, ບິດບາດ ຂອງຄູ, ບຸກຄະລາກອນການສຶກສາ ແລະ ສະຖານການສຶກສາກ່ອນໄວຮຽນ ລວມທັງການໂຄສະນາ, ຊວນເຊື່ອ ທີ່ເກີນຄວາມເປັນຈິງ;
6. ປອມແປງ ເອກະສານ, ຂໍ້ມູນ ທາງລັດຖະການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ລວມທັງການກົດໜ່ວງ ຖ່ວງດຶງ ເອກະສານ ທີ່ກ່ຽວຂ້ອງ;
7. ບໍລິການ, ຊື້ ຂາຍ ສິ່ງເສບຕິດ, ສິ່ງມຶນເມົາ, ຫຼິ້ນການພະນັນທຸກປະເພດ, ບໍລິການບັນເທີງ ແລະ ສິ່ງສຽງດັງຢູ່ພາຍໃນ ແລະ ບ່ອນໃກ້ຄຽງ ສະຖານການສຶກສາກ່ອນໄວຮຽນ;
8. ຮັບ, ຈຳໜ່າຍ ຫຼື ແຈກຢາຍ ອາຫານທີ່ບໍ່ປອດໄພ ຕໍ່ສຸຂະພາບ ແລະ ພັດທະນາການ ຂອງເດັກ;
9. ເປີດເຜີຍ ຫຼື ເຜີຍແຜ່ ສິ່ງລາມົກ ອະນາຈານ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 57 ຂໍ້ຫ້າມ ສຳລັບສະຖານການສຶກສາກ່ອນໄວຮຽນ**

ຫ້າມ ສະຖານການສຶກສາກ່ອນໄວຮຽນ ມີ ພຶດຕິກຳ ດັ່ງນີ້:

1. ຮັບ ຫຼື ບັນຈຸ ນັກຮຽນ ເຂົ້າຫ້ອງຮຽນ ເກີນອັດຕາສ່ວນ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
2. ກຳນົດ ຄ່າຮຽນ, ຄ່າທຳນຽມ ແລະ ຄ່າບໍລິການ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ຈຳແນກ ຫຼື ຈຳກັດ ທາງດ້ານ ເພດ, ເຜົ່າ, ສາສະໜາ, ສະຖານະພາບທາງຮ່າງກາຍ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ຂອງນັກຮຽນ;
4. ຊື້, ຂາຍ ແລະ ໂຄສະນາ ອາຫານທີ່ບໍ່ຖືກຕ້ອງຕາມຫຼັກໂພຊະນາການ, ເຄື່ອງດື່ມທີ່ມີທາດເຫຼົ້າ, ສິ່ງເສບຕິດ ແລະ ເຄື່ອງດື່ມທີ່ບໍ່ມີຄຸນນະພາບ;

5. ນໍາໃຊ້ເຄື່ອງປຸງແຕ່ງອາຫານ, ພືດຜັກ, ປາ ແລະ ຊີ້ນ ທີ່ບໍ່ຖືກຕ້ອງຕາມຫຼັກໂພຊະນາການ ເຂົ້າໃນການປຸງແຕ່ງອາຫານໃນສະຖານການສຶກສາກ່ອນໄວຮຽນ;

6. ປ່ຽນແປງສິດນໍາໃຊ້, ຄຸ້ມຄອງ ທີ່ດິນ ແລະ ຊັບສິນ ຂອງລັດ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 58 ຂໍ້ຫ້າມ ສໍາລັບຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ

ຫ້າມ ຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ ມີ ພຶດຕິກໍາ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ໃນການຈັດຕັ້ງການຮຽນ-ການສອນ ແລະ ການປະຕິບັດໜ້າທີ່ ໃນການນໍາພາ, ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ອໍານວຍຄວາມສະດວກ ໃນສະຖານການສຶກສາກ່ອນໄວຮຽນ;

2. ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຫ້ ຫຼື ຮັບ ເປັນສື່ກາງ ໃນການ ໃຫ້ ຫຼື ຮັບ ສິນບົນ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ໝູ່ເພື່ອນ;

3. ບິດເບືອນເນື້ອໃນຫຼັກສູດ, ນໍາໃຊ້ການສອນເພີ່ມ ໂດຍການບັງຄັບ ລວມທັງການທຸຈະລິດ ໃນການຈັດຕັ້ງການຮຽນ-ການສອນ;

4. ໃຊ້ຄວາມຮຸນແຮງ, ນາບຂູ່, ໃຊ້ວາຈາທີ່ບໍ່ສຸພາບ ຕໍ່ນັກຮຽນ ລວມທັງການຈໍາແນກ ຫຼື ຈໍາກັດ ທາງດ້ານເພດ, ເຜົ່າ, ສາສະໜາ, ສະຖານະພາບທາງຮ່າງກາຍ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ຂອງນັກຮຽນ;

5. ນຸ່ງເຄື່ອງແບບຄູ ເຂົ້າສະຖານບັນເທີງ ຫຼື ສະຖານທີ່ອື່ນທີ່ບໍ່ເໝາະສົມ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 59 ຂໍ້ຫ້າມ ສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກໍາ ດັ່ງນີ້:

1. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ ຫຼື ຂາດຄວາມຮັບຜິດຊອບ ລວມທັງການປະພຶດໃນສິ່ງທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງຊາດ;

2. ປອມແປງ ເອກະສານ, ຂໍ້ມູນ ຫຼື ນໍາໃຊ້ເອກະສານປອມ, ກົດໜ່ວງຖ່ວງດຶງ ຫຼື ທໍາລາຍເອກະສານ ທີ່ພົວພັນກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

3. ສໍ້ລາດບັງຫຼວງ, ໃຫ້ ຫຼື ຮັບ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;

4. ສວຍໃຊ້ສິດ, ໜ້າທີ່ ຫຼື ອໍານາດ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ໝູ່ເພື່ອນ;

5. ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ ພາຍໃນສະຖານການສຶກສາກ່ອນໄວຮຽນ, ຊຸມຊົນ ແລະ ສັງຄົມ;

6. ໃຊ້ຄວາມຮຸນແຮງ, ນາບຂູ່, ໃຊ້ວາຈາທີ່ບໍ່ສຸພາບ ຕໍ່ນັກຮຽນ ລວມທັງການຈໍາແນກ ຫຼື ຈໍາກັດ ທາງດ້ານເພດ, ເຜົ່າ, ສາສະໜາ, ສະຖານະພາບທາງຮ່າງກາຍ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ຂອງນັກຮຽນ;

7. ໂຄສະນາ ຫຼື ສົ່ງເສີມ ເຄື່ອງດື່ມທີ່ມີທາດເຫຼົ້າ, ສິ່ງເສບຕິດ ແລະ ເຄື່ອງດື່ມທີ່ບໍ່ມີຄຸນນະພາບ ໃນສະຖານການສຶກສາກ່ອນໄວຮຽນ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 13
# ການຄຸ້ມຄອງ ແລະ ການກວດກາວຽກງານ ການສຶກສາກ່ອນໄວຮຽນ

**ມາດຕາ 60 ອົງການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ**

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາວຽກງານການສຶກສາກ່ອນໄວຮຽນ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;
4. ສະຖານການສຶກສາກ່ອນໄວຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ໂຄງການພັດທະນາການສຶກສາກ່ອນໄວຮຽນ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ມາເປັນ ແຜນການ, ແຜນງານ ແລະ ໂຄງການ ລະອຽດ ພ້ອມທັງ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;
4. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;
5. ປະກາດໃຊ້ ແລະ ຍົກເລີກຫຼັກສູດ ການສຶກສາກ່ອນໄວຮຽນ ລວມທັງການພິຈາລະນາ ແລະ ອະນຸມັດຫຼັກສູດການສຶກສາກ່ອນໄວຮຽນນານາຊາດ;
6. ອະນຸຍາດສ້າງຕັ້ງ, ຂະຫຍາຍ, ຍຸບເລີກ ສະຖານການສຶກສາກ່ອນໄວຮຽນ ລວມທັງການຄຸ້ມຄອງດ້ານວິຊາການ ຂອງສະຖານການສຶກສາກ່ອນໄວຮຽນ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;
8. ສ້າງ, ບຳລຸງ, ຍົກລະດັບ ຄວາມຮູ້, ຄວາມສາມາດ ຂອງຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ;
9. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;
10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

11. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານກ່ຽວກັບການສຶກສາກ່ອນໄວຮຽນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ເປັນແຜນການ, ແຜນງານ ແລະ ໂຄງການ ລະອຽດ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສຶກສາກ່ອນໄວຮຽນ;

3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ ພາຍໃນແຂວງ, ນະຄອນຫຼວງ;

4. ສ້າງ, ບຳລຸງ, ຍົກລະດັບ ຄວາມຮູ້, ຄວາມສາມາດ ຂອງຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ;

5. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

6. ປະສານສົມທົບກັບ ພະແນກການ, ອົງການ ຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;

7. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສຶກສາກ່ອນໄວຮຽນຕາມການມອບໝາຍ;

8. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ວຽກງານການສຶກສາກ່ອນໄວຮຽນ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ ເປັນແຜນການ, ແຜນງານ ແລະ ໂຄງການ ລະອຽດ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສຶກສາກ່ອນໄວຮຽນ;

3. ປຸກລະດົມ, ຂົນຂວາຍ ພໍ່ແມ່, ຜູ້ປົກຄອງເດັກ ໃຫ້ສົ່ງເດັກມາເຂົ້າຮຽນຕາມເກນອາຍຸ;

4. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ ພາຍໃນເມືອງ, ເທດສະບານ, ນະຄອນ;

5. ສ້າງ, ບຳລຸງ, ຍົກລະດັບ ຄວາມຮູ້, ຄວາມສາມາດ ຂອງຄູ ແລະ ບຸກຄະລາກອນ ຢູ່ສະຖານການສຶກສາກ່ອນໄວຮຽນ;

6. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

7. ປະສານສົມທົບກັບ ຫ້ອງການ, ອົງການ ຂັ້ນເມືອງ, ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;

8. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ວຽກງານການສຶກສາກ່ອນໄວຮຽນ ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງສະຖານການສຶກສາກ່ອນໄວຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການສຶກສາກ່ອນໄວຮຽນ ສະຖານການສຶກສາກ່ອນໄວຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການການສຶກສາກ່ອນໄວຮຽນ;

3. ເກັບກຳ, ສັງລວມ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

4. ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;

5. ປຸກລະດົມ, ຂົນຂວາຍ ແລະ ນຳພາຊຸມຊົນ ໃນການມີສ່ວນຮ່ວມ ແລະ ປະກອບສ່ວນ ທຶນ, ວັດຖຸປະກອນ ແລະ ສິ່ງອື່ນ;

6. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ;

7. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ວຽກງານການສຶກສາກ່ອນໄວຮຽນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກ ສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບ ຂະແໜງການສຶກສາທິການ ແລະ ກິລາ ໃນການສ້າງແຜນ, ແບ່ງງົບປະມານ, ລົງທຶນ, ກໍ່ສ້າງພື້ນຖານໂຄງລ່າງ, ຈັດຫາ ແລະ ປົກປັກຮັກສາສະຖານການສຶກສາກ່ອນໄວຮຽນ, ວັດຖຸປະກອນ, ຊ່ວຍເຫຼືອ ອຳນວຍຄວາມສະດວກ, ຕິດຕາມ, ກວດກາ ແລະ ປະເມີນຜົນ ເພື່ອເຮັດໃຫ້ວຽກງານການສຶກສາກ່ອນໄວຮຽນ ມີຄຸນນະພາບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ.

**ມາດຕາ 66 ເນື້ອໃນການກວດກາ**

ການກວດກາວຽກງານການສຶກສາກ່ອນໄວຮຽນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

2. ການຈັດຕັ້ງປະຕິບັດ ແຜນການ, ແຜນງານ, ໂຄງການ ເນື້ອໃນຫຼັກສູດ ແລະ ວິທີການສິດສອນ ຢູ່ສະຖານການສຶກສາກ່ອນໄວຮຽນ;

3. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ຄູ, ບຸກຄະລາກອນ ແລະ ເຈົ້າໜ້າທີ່ ກ່ຽວກັບວຽກງານການສຶກສາກ່ອນໄວຮຽນ;

4. ການຄຸ້ມຄອງ ບໍລິຫານ ຂອງຜູ້ດຳເນີນກິດຈະການ ກ່ຽວກັບການສຶກສາກ່ອນໄວຮຽນ;

5. ການນຳໃຊ້ງົບປະມານ ແລະ ການເງິນ ຂອງອົງການຄຸ້ມຄອງວຽກງານການສຶກສາກ່ອນໄວຮຽນ.

**ມາດຕາ 67 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ. ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 14
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 68 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 69 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

# ໝວດທີ 15
# ບົດບັນຍັດສຸດທ້າຍ

**ມາດຕາ 70 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນສູງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 71 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ ...................................................ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**